Supported by:

Federal Ministry
for the Environment, Nature Conservation,
Building and Nuclear Safety

# ໂຄງການ Mekong WET
## ເພື່ອເສີມຂະຫຍາຍຄວາມສາມາດຟື້ນໂຕ ຂອງດິນບໍລິເວນນໍ້າໃນບັນດາປະເທດແມ່ນໍ້າຂອງຕອນລຸ່ມ




## ດິນບໍລິເວນນໍ້າໃນຂົງເຂດລຸ່ມແມ່ນໍ້າຂອງ

ດິນບໍລິເວນນໍ້າ, ປະກອບດ້ວຍ: ບຶງ, ແມ່ນໍ້າ, ໂຄງການປະກາລັງ ແລະ ແຫລ່ງທີ່ຢູ່ອາໄສຊາຍຝັງ ແລະ ເທິງຝັງ ທີ່ບົດບາດສຳຄັນຫລາຍ ພວກມັນຊ່ວຍຄວບຄູ້ມການໄຫລວຽນຂອງນໍ້າ, ສະໜັບສະໜູນດ້ານການປະມົງ, ສະໜອງນໍ້າສະອາດ, ເກັບກັກກາກບອນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ໂດຍການເຮັດໜ້າທີ່ເປັນກັນຊົນກັນການເຊາະເຈື່ອນ ແລະ ຜົນກະທົບຂອງໄພນໍ້າຖ້ວມ, ສຸນາມິ ແລະ ດິນຖະຫລົ່ມ. ນອກນັ້ນມັນຍັງສະໜອງຖິ່ນທີ່ຢູ່ອາໄສຂອງສັດ ແລະ ພືດຫລາຍຊະນິດ

ໃນຂົງເຂດລຸ່ມແມ່ນໍ້າຂອງ, ປະຊາຊົນຫລາຍລ້ານຄົນອາໄສດິນບໍລິເວນນໍ້າເພື່ອຄວາມຢູ່ລອດຂອງເຂົາເຈົ້າ. ສາມລ່ຽມແມ່ນໍ້າຂອງຕອນລຸ່ມສະໜັບສະໜູນການປະມົງທີ່ມີປະສິດທິພາບທີ່ສຸດໃນໂລກ ເຊິ່ງມີມູນຄ່າປະມານ 3 ຕື້ໂດລາສະຫາລັດຕໍ່ປີ ແລະ ໃຫ້ຊຸ່ມຊົນ

ທ້ອງຖິ່ນເກືອບ 80% ຂອງປະລິມານໂປຕີນທັງໝົດຈາກສັດ

ໃນຊຸມທົດສະວັດທີ່ຜ່ານມາ ການພັດທະນາພື້ນຖານໂຄງລ່າງ, ການຕັດໄມ້ທຳລາຍປ່າ, ການຂະຫຍາຍເນື້ອທີ່ປູກເຂົ້ານາແຊງ ແລະ ການເພີ່ມຂຶ້ນຂອງຕົວເມືອງ ເຮັດໃຫ້ດິນບໍລິເວນນ້ຳລົດໜອຍລົງ ແລະ ສິ່ງໃຫ້ຜົນເຮັດໃຫ້ບ່ອນວາງໄຂ ແລະ ຂະຫຍາຍພັນປາເສຍຫາຍ ແລະ ເຮັດໃຫ້ຄຸນນະພາບນ້ຳຫຼຸດລົງໄດ້.

ຊາວນາຫລາຍພື້ນທີ່ໄດ້ຮັບຜົນກະທົບລາຍຂຶ້ນຈາກນ້ຳບັນຫານ້ຳເຄັມ, ດິນຖະຫຼົ່ມຢ່າງ ແລະນ້ຳຖ້ວມ ເຊິ່ງຖືກເພີ່ມທະວີຄວາມຮຸນແຮງຈາກການປ່ຽນແປງດິນຟ້າອາກາດ.

### ໂຄງການ Mekong WET

ໂດຍການສະໜັບສະໜູນຈາກອົງການສາກົນດ້ານການປ່ຽນແປງດິນຟ້າອາກາດ (IKI) ຂອງກະຊວງເພື່ອສິ່ງແວດລ້ອມ, ການອະນຸລັກທຳມະຊາດ, ການສ້າງ ແລະ ຄວາມປອດໄພດ້ານພະລັງງານນິວເຄຣຍ (BMUB) ຂອງປະເທດເຢຍລະມັນ, *"ໂຄງການ Mekong WET: ສ້າງຄວາມສາມາດພື້ນໂຕຂອງດິນບໍລິເວນນ້ຳໃນເຂດແມ່ນ້ຳຂອງຕອນລຸ່ມ"*,ໂຄງການມີຈຸດປະສົງທີ່ຈະສ້າງການປັບໂຕຕໍ່ການປ່ຽນແປງດິນຟ້າອາກາດໂດຍການໃຊ້ຜົນປະໂຫຍດ (ດ້ານດີ) ຂອງດິນບໍ່ລິເວນນ້ຳໃນປະເທດກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ.

ໂຄງການ Mekong WET ຈະຊ່ວຍໃນ 4 ປະເທດປະຕິບັດຄຳໝັ້ນສັນຍາຂອງປະເທດທີ່ມີຕໍ່ສົນທິສັນຍາຣາມຊາ, ສົນທິສັນຍາສາກົນເພື່ອການອະນຸລັກ ແລະນຳໃຊ້ດິນບໍລິເວນນ້ຳແບບຍືນຍົງ, ແລະ ເພື່ອໃຫ້ບັນລຸເປົ້າໝາຍຊີວະນາໆພັນໄອຈິ.

ເນື່ອງຈາກໂຄງການນີ້ເນັ້ນໃສ່ລະບົບນິເວດດິນບໍລິເວນນ້ຳສະເພາະ, ໂຄງການນີ້ທັງຈະຊ່ວຍສະໜັບສະໜູນລັດຖະບານຂອງແຕ່ລະປະເທດໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນພາຍໃຕ້ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະນາໆພັນ (CBD) ແລະ ສືບຕໍ່ຈັດຕັ້ງປະຕິບັດຄຳໝັ້ນສັນຍາກ່ຽວກັບການປັບໂຕ ແລະ ການຫຼຸດຜ່ອນຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ພາຍໃຕ້ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດແຫ່ງສະຫະປະຊາຊາດ (UNFCCC).



Sarus cranes in Anlung Pring, Cambodia.

### ຈຸດປະສົງຂອງໂຄງການ Mekong WET

ໂຄງການ Mekong WET ມີຈຸດປະສົງ:

- ດຳເນີນການປະເມີນຄວາມສ່ຽງຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ພັດທະນາແຜນຄຸ້ມຄອງໃນ 10 ພື້ນທີ່ຣາມຊາທີ່ມີຢູ່ປະຈຸບັນ ຫຼື ພື້ນທີ່ໆມີທ່າແຮງອາດຈະເປັນເຂດຣາມຊາແຫ່ງໃຫມ່, ໂດຍສຸມໃສ່ການສ້າງການປັບຕົວ ແລະຟື້ນໂຕຕໍ່ການປ່ຽນແປງດິນຟ້າອາກາດ.
- ປັບປຸງການຮ່ວມມືລະດັບພາກພື້ນກ່ຽວກັບການຄຸ້ມຄອງດິນບໍລິເວນນ້ຳຊາຍແດນ.
- ສ້າງຄວາມຮູ້, ທັກສະ ແລະ ຄວາມຊຳນານງານຂອງພະນັກງານຄຸ້ມຄອງດິນບໍລິເວນນ້ຳ ແລະ ຕົວແທນຈາກຊຸມຊົນກ່ຽວກັບການປັບໂຕຕໍ່ການປ່ຽນແປງດິນຟ້າອາກາດໃນລະບົບສັງຄົມນິເວດດິນບໍລິເວນນ້ຳ.
- ສະໜັບສະໜູນແຜນງານທົດລອງເພື່ອສ້າງການຟື້ນໂຕ ແລະ ຈັດຕັ້ງກິດຈະກຳທີ່ສຳຄັນທີ່ໄດ້ກຳນົດໃນແຜນຄຸ້ມຄອງດິນບໍລິເວນນ້ຳ.

- ແລກປ່ຽນບົດຮຽນ ແລະ ວິທີການກັບເຂດຣາມຊາອື່ນໆ, ເຊັ່ນດຽວເຂດທີ່ມີທ່າແຮງອາດເປັນເຂດຣາມຊາໃຫມ່ໃນ 4 ປະເທດ ຂອງໂຄງການ Mekong WET.



ຜູ້ອາໄສຢູ່ໃນທ້ອງຖິ່ນຂອງເກາະຊ້າງເກັບຫອຍນາງໂລມໃນ ເກາະສະລັກຄໍາໃບ ແຂວງຕາດ ປະເທດໄທ.

ເພື່ອໃຫ້ສຳເລັດຈຸດປະສົງເຫຼົ່ານີ້, ໂຄງການ Mekong WET ຈະສະຫນັບສະຫນູນໂຄງການທີ່ສ້າງໃຫຍ່ຄື ໂຄງການຣາມຊາພາກພື້ນອິນດູ-ມຽນມາ (IBRRI).

ໂຄງການ IBRRI ເປັນໂຄງການໄລຍະຍາວ, ລະບົບທີ່ປະກອບດ້ວຍຫຼາຍອົງປະກອບທີ່ມີຈຸດປະສົງທີ່ຈະສົ່ງເສີມການຈັດຕັ້ງປະຕິບັດສົນທິສັນຍາຣາມຊາແບບມີປະສິດຕິພາດຂອງ 5 ລັດພາຄີ (ກໍາປູເຈຍ, ສປປ. ລາວ, ມຽນມາ, ໄທ ແລະ ຫວຽດນາມ), ດ້ວຍການສະຫນັບສະຫນູນການສິນທະນາລະດັບພາກພື້ນ ແລະ ການຮ່ວມມື, ຄົ້ນຄ້ວາ, ການພັດທະນາແຜນການຄຸ້ມຄອງ ແລະ ການແລກປ່ຽນວິທີການປະຕິບັດທີ່ດີທີ່ສຸດໃນການຄຸ້ມຄອງເຂດດິນບໍລິເວນນໍ້າ.

"ໂຄງການ Mekong WET ບໍ່ພຽງແຕ່ຊ່ວຍປັບປຸງການຮ່ວມມືພາກພື້ນກ່ຽວກັບການຈັດການດິນບໍເວນນໍ້າຊາຍແດນ ແຕ່ຍັງຊ່ວຍໃນການປູກຈິດສຳນຶກກ່ຽວກັບຜົນປະໂຫຍດຫຼາຍຢ່າງທີ່ດິນບໍລິເວນນໍ້າມີຕໍ່ສັງຄົມ" *ກ່າວໂດຍ **ທ່ານ ເຈກ ບຣັນເນີ, ຫົວໜ້າ ກຸ່ມປະເທດອິນດູຈີນ, IUCN ອາຊີ.***

**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານ ນາງ ແອງເຈີລາ ໂຈເອວ ຄາເດັນນ່າ
ພະນັກງານໂຄງການອາວຸໂສ
ຫ້ອງການ IUCN ປະຈຳພາກພື້ນອາຊີ
63 ຊອຍສຸຂຸມວິດ 39 ວັດທະນາ, ກຸງເທບ 10110
ປະເທດໄທ
Email: angela.joehlcadena@iucn.org
Tel: +662 662 4029

ທ່ານ ນາງ ພຸດສາຄອນ ອຸ່ນຈິດ, ຫົວໜ້າຫ້ອງການ, ຫ້ອງການ IUCN ປະຈຳ ສປປ ລາວ,
ບ້ານ ນາໃຊ, ເມືອງ ໄຊເສດຖາ, ແຂວງ ກະແພງ
ນະຄອນຫຼວງ ວຽງຈັນ, ສປປ ລາວ
ອີເວມ: Phoutsakhone.ounchith@iucn.org
ໂທ: +85621 417455